# MEMORANDUM OF UNDERSTANDING

between

## PAKSE TEACHER TRAINING COLLEGE, LAO PEOPLE'S DEMOCRATIC REPUBLIC
and
## FACULTY OF EDUCATION, KHON KAEN UNIVERSITY, THAILAND

Pakse Teacher Training College (Pakse TTC), Lao People's Democratic Republic and Faculty of Education, Khon Kaen University (KKU), Thailand agree to enter into a formal collaborative agreement based on a foundation of trust for the mutual benefit and development of the two institutions and the promotion of international understanding and goodwill.

1. Pakse TTC and KKU will jointly develop some or all of the following activities based on their respective academic and educational needs:
    a. exchange of research materials, publications and information;
    b. support for distance learning courses, with mutual written consent before expenses are incurred;
    c. organization of joint research programs;
    d. exchange of students, staff and non-academic staff;
    e. other activities agreed by two institutions.
2. The implementation of exchange programs under this agreement shall be separately negotiated and determined by both universities.
3. Nothing shall diminish the full autonomy of either institution, nor will any constraints or financial obligations be imposed by either upon the other in carrying out the agreement.
4. This Memorandum is subject to revision or renewal by mutual agreement. It is also understood that either institution may terminate the agreement at any time, although such action will only be taken after mutual consultation in order to avoid any possible inconvenience to all parties.
5. The Memorandum will be valid for five years and become effective when the representatives of both institutions have signed and dated the document.

| | |
|---|---|
| **Authorized to sign and on behalf of Pakse Teacher Training College** | **Authorized to sign and on behalf of Khon Kaen University** |
| [signature] | M. Inprasitha |
| Khamphiane Mekchone<br>Director, Pakse Teacher Training College | Maitree Inprasitha<br>Dean, Faculty of Education<br>Khon Kaen Univerity |
| Date: 7 - 11 - 2016 | Date: 7 Nov 2016 |

# ບົດບັນທຶກ

## ຂໍ້ຕົກລົງຮ່ວມມືທາງດ້ານວິຊາການ

## ລະຫວ່າງ

## ຄະນະສຶກສາສາດ ມະຫາວິທະຍາໄລຂອນແກ່ນ ປະເທດໄທ ກັບ ວິທະຍາໄລຄູປາກເຊ ສ.ປ.ປ. ລາວ

ຄະນະສຶກສາສາດ ມະຫາວິທະຍາໄລຂອນແກ່ນ ປະເທດໄທ ກັບ ວິທະຍາໄລຄູປາກເຊ ສ.ປ.ປ. ລາວ ຕົກລົງເຫັນດີໃນການເຮັດຂໍ້ຕົກລົງຄວາມຮ່ວມມືຢ່າງເປັນທາງການບົນພື້ນຖານຂອງຄວາມໄວ້ວາງໃຈເພື່ອຜົນປະໂຫຍດຮ່ວມກັນໃນການພັດທະນາຂອງສອງສະຖາບັນ ແລະ ການສົ່ງເສີມ ຄວາມເຂົ້າໃຈລະຫວ່າງປະເທດທັງຍັງເສີມຂະຫຍາຍຄວາມສຳພັນທະໄມຕີອັນດີງາມຂອງທັງສອງປະເທດຮ່ວມກັນ.

1. ມະຫາວິທະຍາໄລຂອນແກ່ນ (ມຂ) ປະເທດໄທ ກັບ ວິທະຍາໄລຄູປາກເຊ (ວ.ຄ.ປ) ສ.ປ.ປ. ລາວ ຈະຮ່ວມມືກັນ ພັດທະນາ ບາງກິດຈະກຳ ຫຼື ທັງໝົດຂອງບັນດາກິດຈະກຳທີ່ກ່ຽວຂ້ອງກັບດ້ານວິຊາການ ແລະ ຄວາມຕ້ອງການຂອງການສຶກສາ ຕໍ່ໄປນີ້:

ກ. ແລກປ່ຽນອຸປະກອນການວິໄຈ, ຕີພິມ ແລະ ເຜີຍແຜ່ຂໍ້ມູນການວິໄຈ;

ຂ. ສະໜັບສະໜູນຫຼັກສູດການສຶກສາທາງໄກໂດຍການຂຽນຂໍ້ຕົກລົງເຫັນດີຂອງທັງສອງຝ່າຍກ່ອນທີ່ຈະມີຄ່າໃຊ້ຈ່າຍຕ່າງໆເກີດຂຶ້ນ.

ຄ. ຮ່ວມກັນສ້າງໂຄງການວິໄຈ.

ງ. ແລກປ່ຽນນັກສຶກສາ, ພະນັກງານວິຊາການ ແລະ ພະນັກງານທີ່ບໍ່ແມ່ນນັກວິຊາການ.

ຈ. ກິດຈະກຳອື່ນໆ ທີ່ທີ່ຢູ່ພາຍໃຕ້ການເຫັນດີເຫັນພ້ອມໂດຍສອງສະຖາບັນ.

2. ການປະຕິບັດໂຄງການການແລກປ່ຽນພາຍໃຕ້ຂໍ້ຕົກລົງນີ້ຈະຕ້ອງມີການເຈລະຈາ ແລະ ກຳນົດທີ່ແຍກອອກໄປອີກໂດຍທັງສອງສະຖາບັນ.

3. ບໍ່ມີຫຍັງໃນນີ້ທີ່ເປັນຂໍ້ບັງຄັບ, ຂໍ້ຈຳກັດ ຫຼື ພັນທະທາງການເງິນ ທີ່ເປັນການຮຽກຮ້ອງທັງສອງຝ່າຍໃນການປະຕິບັດຂໍ້ຕົກລົງນີ້.

4. ບົດບັນທຶກຮ່ວມມືສະບັບນີ້ສາມາດເຮັດການປ່ຽນແປງ ຫຼື ຕໍ່ສັນຍາໃໝ່ໄດ້ໂດຍການເຫັນດີເຫັນພ້ອມຂອງສອງຝ່າຍ. ພ້ອມທັງໃຫ້ເຂົ້າໃຈວ່າ ທັງສອງະຖາບັນ ສາມາດສິ້ນສຸດຂໍ້ຕົກລົງຕໍ່ກັນໄດ້ທຸກເມື່ອໂດຍຜ່ານການປຶກສາຫາລືຂອງທັງສອງຝ່າຍເພື່ອຫຼີກລຽງບັນຫາທີ່ຈະເກີດຂຶ້ນໃຫ້ທັງສອງຝ່າຍ.

5. ບົດບັນທຶກຮ່ວມມືສະບັບນີ້ຈະສາມາດຖືກນຳໃຊ້ເປັນເວລາ 5 ປີ ແລະ ມີຜົນນຳໃຊ້ຢ່າງເປັນທາງການເມື່ອຕົວແທນທັງສອງຝ່າຍໄດ້ຮ່ວມກັນລົງລາຍເຊັນ ແລະ ລົງວັນທີໃຫ້ເອກະສານສະບັບນີ້.

ຜູ້ລົງລາຍເຊັນ

ໃນນາມຕາງໜ້າໃຫ້ມະຫາວິທະຍາໄລຂອນແກ່ນ

M. Inprasitha

ຜູ້ຊ່ວຍສາດສະດາຈານ ດຣ. ໄມຕຣີ ອິນປຣະສິດ

ຄະນະບໍດີຄະນະສຶກສາສາດ ມະຫາວິທະຍາໄລຂອນແກ່ນ

ຄັ້ງວັນທີ:.....7 Nov 2016.....

ຜູ້ລົງລາຍເຊັນ

ໃນນາມຕາງໜ້າໃຫ້ວິທະຍາໄລຄູປາກເຊ

ທ່ານ ຄຳພຽນ ເມຈອນ

ຜູ້ອຳນວຍການວິທະຍາໄລຄູປາກເຊ

ຄັ້ງວັນທີ:.....7 - 11 - 2016.....